ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------00-------------

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ່......1308........../ກປຝ

ນະຄອນຫຼວງວຽງຈັນ, ວັນທີ.....02 OCT 2012.....

**ຮຽນ:** ທ່ານ ຫົວໜ້າກົມນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ

**ເລື່ອງ:** ປະກອບຂໍ້ມູນກ່ຽວກັບການ ສົ່ງອອກ-ນຳເຂົ້າ ສາລີ ລ້ຽງສັດ (ສາລີແຂງ) ໃນ ສປປ ລາວ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າ ການ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມປູກຝັງ ສະບັບເລກທີ 1889/ກປ, ລົງວັນທີ 09/08/2012.
- ອີງຕາມ ສະໂນດນຳສົ່ງ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2561/ທອຄ.ກຂອ ລົງວັນທີ 10/9/2012

ຜ່ານການຄົ້ນຄວ້າເອກະສານທີ່ນຳສົ່ງຈາກ ສຳນັກງານສົ່ງເສີມການຄ້າພາຍໃນ, ສະຖານເອກອັກຄະຣາດຊະທູດໄທ ທີ່ໄດ້ຂັດຕິດມານຳເອກະສານຂ້າງເທິງນັ້ນ, ກົມປູກຝັງຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບບັນດາຂໍ້ມູນ ທີ່ຕິດພັນກັບຂະແໜງການປູກຝັງ ຕາມພາລະບົດບາດທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້ທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້ ມີດັ່ງລຸ່ມນີ້:

**1. ລະບຽບການ ນຳເຂົ້າ-ສົ່ງອອກ ສາລີລ້ຽງສັດ ໃນ ສປປ ລາວ**

- ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ ລົງວັນທີ 9/12/2008
- ດຳລັດແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229 /ລບ, ລົງວັນທີ 31 /5/2012
- ບົດແນະນຳ ຂອງຫົວໜ້າກົມປູກຝັງ ກ່ຽວກັບ ຫຼັກການ ແລະ ວິທີການ ໃນການອອກໃບຢັ້ງຢືນ ສຸຂານາໄມພືດ ສະບັບເລກທີ 1077/ກປຝ ລົງວັນທີ 30/9/2010

**1.1. ຂັ້ນຕອນການນຳເຂົ້າ:**

ບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການນຳເຂົ້າສາລີມາໃນ ສປປ ລາວ ຕ້ອງຍື່ນສະເໜີຂໍອະນຸຍາດນຳເຂົ້າ ຈາກກົມປູກຝັງ ກ່ອນລ່ວງໜ້າ 1 ອາທິດ ໂດຍປະກອບເອກະສານຄັດຕິດດັ່ງລຸ່ມນີ້:

- ໃບສະເໜີຂໍອະນຸຍາດນຳເຂົ້າ
- ສຳເນົາໃບອະນຸຍາດດຳເນີນທຸລະກິດດ້ານກະສິກຳ ແລະ ປ່າໄມ້ ຈາກຂະແໜງການກະສິກຳ ແລະ ປ່າໄມ້
- ສຳເນົາໃບທະບຽນດຳເນີນທຸລະກິດຈາກຂະແໜງອຸດສາຫະກຳ ແລະ ການຄ້າ
- ໃບຢັ້ງຢືນສຸຂານາໄມພືດ (Phytosanitary Certificate) (ຈາກປະເທດສົ່ງອອກ)
- ໃບແຈ້ງລາຍການສິນຄ້າ ແລະ ໃບແຈ້ງລາຄາ.

ພາຍຫຼັງໄດ້ຮັບໃບອະນຸຍາດນຳເຂົ້າແລ້ວ, ໃນເວລານຳເຂົ້າຕົວຈິງເຈົ້າຂອງສິນຄ້າຕ້ອງນຳເຂົ້າຜ່ານດ່ານເຂົ້າ-ອອກ ທີ່ອີງການຄຸ້ມຄອງວຽກງານປ້ອງກັນພືດກຳນົດໃຫ້ເທົ່ານັ້ນ ໂດຍແຈ້ງຕໍ່ເຈົ້າໜ້າທີ່ປ້ອງກັນພືດປະຈຳດ່ານເພື່ອຂໍຮັບການກວດກາສັດຕູພືດ ຕາມລະບຽບກົດໝາຍ ກ່ອນດຳເນີນການແຈ້ງພາສີໃນຂັ້ນຕອນຕໍ່ໄປ.

1.2. **ຂັ້ນຕອນການສົ່ງອອກ:** ຜູ້ສົ່ງອອກຕ້ອງ ສະເໜີຂໍ ໃບຢັ້ງຢືນສຸຂານາໄມພືດ ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນທີ່ມີດ່ານສົ່ງອອກສາລີ ຫຼື ແຂວງໃກ້ຄຽງ ທີ່ໄດ້ຮັບສິດໃນການອອກໃບຢັ້ງຢືນສຸຂານາໄມພືດ ຈາກກົມປູກຝັງມີຄື: ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ນະຄອນຫຼວງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື, ໂດຍປະກອບມີເອກະສານຄັດຕິດດັ່ງລຸ່ມນີ້:

- ໃບສະເໜີຂໍຢັ້ງຢືນສຸຂານາໄມພືດ
- ໃບອະນຸຍາດນຳເຂົ້າ [1] (ອອກໃຫ້ໂດຍ ສຳນັກງານ ຄວບຄຸມວັດສະດຸການກະເສດ, ກົມວິຊາການກະເສດ ຫຼື ດ່ານກວດພືດ ຂອງປະເທດໄທ)
- ໃບຢັ້ງຢືນກວດກາສັດຕູພືດ (ອອກໃຫ້ໂດຍຂະແໜງປູກຝັງ ແຂວງ, ນະຄອນ ບ່ອນທີ່ເປັນແຫຼ່ງຜະລິດພືດສົ່ງອອກ)
- ໃບແຈ້ງລາຍການສິນຄ້າ ແລະ ໃບແຈ້ງລາຄາ.

## 2. ເນື້ອທີ່ການປູກສາລີ ລ້ຽງສັດ (ສາລີແຂງ) ທົ່ວປະເທດ

| ລ/ດ | ແຂວງ | ເນື້ອທີ່ (ເຮັກຕາ) | ຜົນຜະລິດ (ໂຕນ) |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 1,980 | 9,120 |
| 2 | ຜົ້ງສາລີ | 3,545 | 16,890 |
| 3 | ຫຼວງນ້ຳທາ | 3,910 | 16,605 |
| 4 | ອຸດົມໄຊ | 20,045 | 95,110 |
| 5 | ບໍ່ແກ້ວ | 18,480 | 100,500 |
| 6 | ຫຼວງພະບາງ | 8,255 | 32,355 |
| 7 | ຫົວພັນ | 22,610 | 132,400 |
| 8 | ໄຊຍະບູລີ | 61,480 | 300,820 |
| 9 | ຊຽງຂວາງ | 21,440 | 95,820 |
| 10 | ວຽງຈັນ | 8,920 | 52,910 |
| 11 | ບໍລິຄຳໄຊ | 2,075 | 12,300 |
| 12 | ຄຳມ່ວນ | 65 | 335 |
| 13 | ສະຫວັນນະເຂດ | 100 | 390 |
| 14 | ສາລະວັນ | 3,945 | 24,190 |
| 15 | ເຊກອງ | 395 | 1,800 |
| 16 | ຈຳປາສັກ | 4,445 | 26,120 |
| 17 | ອັດຕະປື | 10 | 50 |
| | ລວມ | 181,700 | 917,715 |

ແຫຼ່ງຂໍ້ມູນ: ປື້ມສະຖິຕິ ພືດຕ່າງໆ ປະຈຳປີ 2011, ກົມປູກຝັງ

[1] ອີງຕາມປະກາດຂອງກົມວິຊາການກະເສດຂອງປະເທດໄທ ລົງວັນທີ 3 ກຸມພາ ປີ ພສ. 2552 ວ່າດ້ວຍ ສິ່ງຕ້ອງຫ້າມທີ່ຜ່ານການວິເຄາະຄວາມສ່ຽງສັດຕູພືດ ແລະ ປະກາດຂອງກົມວິຊາການ ກະເສດປະເທດໄທ ເລື່ອງ ຫຼັກການ, ວິທີການ ແລະ ເງື່ອນໄຂ ການນຳເຂົ້າ ຫຼື ນຳຜ່ານ ສິ່ງຕ້ອງຫ້າມ, ສິ່ງກຳກັດ ແລະ ສິ່ງບໍ່ຕ້ອງຫ້າມ ລົງວັນທີ 12 ກັນຍາ ພສ 2551.

3. ສະຖິຕິການສົ່ງອອກ ສາລີ ລ້ຽງສັດ (ສາລີແຂງ) ໄປປະເທດໄທ ໃນປີ 2011

| ລ/ດ | ແຂວງ | ຈຳນວນ (ໂຕນ) |
|---|---|---|
| 1 | ໄຊຍະບູລີ | 229,776 |
| 2 | ບໍ່ແກ້ວ | 8,240 |
| 3 | ຈຳປາສັກ | 3,944 |
| 4 | ບໍລິຄຳໄຊ | 78 |
| | ລວມ | 242,038 |

ໝາຍເຫດ: - ຂໍ້ມູນສົ່ງອອກທີ່ຜ່ານດ່ານປ້ອງກັນພືດ, ປີ 2011 ໃນລະບົບສຸຂານາໄມພືດ (NPD)

ແຫຼ່ງຂໍ້ມູນ: - ບົດລາຍງານພະແນກກັກກັນພືດ, ກົມປູກຝັງ ປີ 2011

- ສ່ວນຂໍ້ມູນການຄ້າຊາຍແດນ ແມ່ນບໍ່ມີໃນລະບົບ ສຸຂານາໄມພືດ (NPD)

ດັ່ງນັ້ນ, ຈຶ່ງສະເໜີຂໍ້ມູນມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ບ່ອນສົ່ງ:

- ຫ້ອງການ ກະຊວງ ກປ 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ເກັບມ້ຽນ 1 ສະບັບ